# ໖. ຢາກິນເຂົ້າແຊບຂອງຊຽງໝ້ຽງ

ມື້ນຶ່ງຊຽງໝ້ຽງຂຶ້ນເມືອເຝົ້າພຍາຜູ່ເປັນອ້າຍຢູ່ໃນໂຮງ, ພຍາໄດ້ຈົ່ມນຳຊຽງໝ້ຽງວ່າ ຊຽງເອີຍດຽວນີ້ເຮົາກິນເຂົ້າກິນປາບໍ່ຄ່ອຍແຊບ ເຄື່ອງກິນເຕັມພາກໍບໍ່ຄ່ອຍຈະຄຶດຢາກ ໂຕມີຢາກິນເຂົ້າແຊບແດ່ບໍ ? ຊຽງໝ້ຽງຕອບວ່າມີແທ້ ຢາກິນເຂົ້າແຊບ, ພຍາຈຶ່ງບອກໃຫ້ຊຽງໝ້ຽງຊອກຫາມາໃຫ້ ຝ່າຍຊຽງໝ້ຽງກໍຮັບປາກ ວ່າຈະຊອກຫາມາໃຫ້ໃນມື້ອື່ນ, ກ່ອນລາພຍາກັບເມືອເຮືອນຊຽງໝ້ຽງບອກວ່າ ມື້ອື່ນຢ່າຟ້າວກິນເຂົ້າເດັດຂາດ ຈົນກວ່າຢາກິນເຂົ້າຈະມາຮອດ ; ຫລັງຈາກລາພຍາແລ້ວຊຽງໝ້ຽງກໍກັບເມືອ ນອນຢູ່ຢູ່ກັບເມັຽເສີຍ ບໍ່ສົນໃຈຊິໄປຊອກໄປຫາຮາກຢາກິນເຂົ້າແຊບ.

ມື້ຕໍ່ມາພຍາກໍປະຕິບັດຕາມຄຳເວົ້າຂອງຊຽງໝ້ຽງ ຄືບໍ່ຍອມກິນເຂົ້າແມ່ນແຕ່ຄຳດຽວ, ຄອງຖ້າຢານຳຊຽງໝ້ຽງຕັ້ງແຕ່ເຊົ້າຈົນຮອດສວາຍຮອດເພນ ກໍບໍ່ເຫັນຊຽງໝ້ຽງນຳເອົາຢາມາໃຫ້, ຄອງຕາມຄອງ ທາງທ້ອງພຍາກຫິວເຂົ້າ ຈົນແສບກະເພາະ ເມື່ອອົດບໍ່ໄດ້ກໍຈຶ່ງສັ່ງໃຫ້ແຕ່ງພາເຂົ້າມາກິນ, ປະກົດວ່າພຍາກິນໄດ້ດີເອົາແທ້ເອົາວ່າ ຂອງກິນໃນພາເຂົ້າ ເກືອບວ່າບໍ່ມີເຍືອງໃດເຫລືອເລີຍ, ກິນເຂົ້າກິນນ້ຳອີ່ມດີແລ້ວ ກໍຍັງຄອງຫາຊຽງໝ້ຽງຢູ່ ຈົນວ່າຕາເວັນບ່າຍ ຊຽງໝ້ຽງກໍຈຶ່ງມາເຝົ້າ, ພໍພຍາຫລຽວເຫັນໜ້າຊຽງໝ້ຽງ ພຍາກໍຟ້າວຖາມໂລດວ່າ ເປັນຈັ່ງໃດ ໄດ້ບໍຢາກິນເຂົ້າແຊບກູຖ້າມຶງຈົນອິດຈົນເມື່ອຍຫິວເຂົ້າຈົນແສບທ້ອງແສບໄສ້ ອົດບໍ່ໄດ້ກູເລີຍກິນກ່ອນມຶງ ແຕ່ປາກົດວ່າກິນໄດ້ດີອີ່ຫລີຊຽງເອີຍ ຂອງແນວວ່າມັນຫິວ .

ຊຽງໝ້ັງໄດ້ຍິນກໍເວົ້າກັບພຍາວ່າ ຖືກແລ້ວພຍາເອີຍ ເຂົ້ານີ້ຍາມຢາກຈິ່ງກິນ ຍາມບໍ່ຢາກຢ່າກິນ ເພິ່ນວ່າກິນຍາມຢາກນີ້ກໍແມ່ນຢາກິນເຂົ້າແຊບຂນາດ ນຶ່ງຄືກັນຈື່ໄວ້, ຄັນຍາມບໍ່ຫິວບໍ່ຢາກ ແມ່ນຊີຕີຊີຂ້າມັນກໍກິນບໍ່ລົງດອກ ມາຄືຊ່າງວ່າໂງ່ແທ້ ເປັນຮອດພຍາຣາຊາກິນເຂົ້າ ກໍຍັງໃຫ້ເພິ່ນໄດ້ບອກໄດ້ສອນ, ເວົ້າແລ້ວຊຽງໝ້ຽງກໍຍ່າງລົງຈາກໂຮງຫລວງເມືອເຮືອນຂອງຕົນ ຢ່າງບໍ່ຮ້ອນບໍ່ເຄືອງ, ສ່ວນວ່າພຍາ ໄດ້ຍິນຄໍາໂອ້ອວດຂອງຊຽງໝ້ຽງ ກໍຄຽດຄຸງໃຈ ວ່າ ຊຽງໝ້ຽງດູຖູກດູແຄນ ເພາະວ່າຍົດພຍາຂອງພຣະອົງ

ເປັນທີ່ເກງຂາມຂອງຄົນທົ່ວໆໄປແຕ່ຊຽງໝ້ຽງມັນມາລໍ້ຫລິ້ນ ທັງໆທີ່ຖາມໂດຍຊື່ໆ, ພຍາຄິດວ່າຊີຕັດຂາດຕັດຄໍຊຽງໝ້ຽງ ເອົາຮ່າງມັນໄຫລນໍ້າຖິ້ມໃຫ້ສິ້ນຄວາມຄຽດແຄ້ນ ພຍານັ່ງຄຶດນອນຄຶດຢູ່ເຖິງສາມມື້ດົງ ຄຶດເຖິງຄໍາພໍ່ສັ່ງໄວ້ວ່າ « ບໍ່ໃຫ້ຖືຊາຫາຄວາມໃຫ້ນ້ອງ » ໃນທີ່ສຸດກໍບໍ່ສາມາດຈະຂ້າຈະຕີຊຽງໝ້ຽງໄດ້ຕາມຄວາມຄຽດນັ້ນເລີຍ. !!!!!!!

*ອ່ານຕໍ່ເຮື່ອງທີ່ເຈັດ ໃນເດືອນໜ້າ*
*໐໗. ຊຽງໝ້ຽງຕີຊ້າງພຍາ*